**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0628/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ: 11/03/2022

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ

ເລື່ອງ: ແຈ້ງມະຕິທີ່ສຳຄັນ ຂອງສະພາບໍລິຫານ ຄັ້ງວັນທີ 11 ມີນາ 2022.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງສະພາບໍລິຫານ ຄັ້ງວັນທີ 11 ມີນາ 2022, ມີລາຍລະອຽດລຸ່ມນີ້:

**1. ຮັບຮອງການແຕ່ງຕັ້ງຄະນະສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່ ຄື:**

| | | |
|---|---|---|
| 1. | ທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ | ຮອງລັດຖະມົນຕີ ກະຊວງການເງິນ, ເປັນປະທານສະພາບໍລິຫານ; |
| 2. | ທ່ານ ສົມພິດ ແກ້ວວິຈິດ | ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານແລະບໍ່ແຮ່ ເປັນກຳມະການ; |
| 3. | ທ່ານ ຄຳແກ້ວ ວິສີສົມບັດ | ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການອິດສະຫຼະ; |
| 4. | ທ່ານ ຄຳມູນ ວິພົງໄຊ | ອາດີດຮອງລັດຖະມົນຕີກະຊວງພາຍໃນ, ເປັນກຳມະການອິດສະຫຼະ; |
| 5. | ທ່ານ ປອ. ພັນປະກິດ ອ່ອນພັນດາລາ | ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສູນກາງພັກ ເປັນກຳມະການອິດສະຫຼະ; |
| 6. | ທ່ານ ຊົນລະວິດ ວິນິດໄສ | ຜູ້ອຳນວຍການ ບໍລິສັດ ຣາຊ-ລາວ ບໍລິການ ຈຳກັດ, ເປັນກຳມະການ; |
| 7. | ທ່ານ ນາງ ມະນີວອນ ພົນອາມາດ | ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ, ເປັນກຳມະການ. |

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແລະ ກຳນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດດັ່ງນີ້:

1. ປະທານສະພາບໍລິຫານ ຫຼື ຮອງປະທານສະພາບໍລິຫານ ຫຼື ຜູ້ອຳນວຍການໃຫຍ່ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດ ແຕ່ພຽງຜູ້ດຽວ; ຫຼື
2. ໃຫ້ກຳມະການທ່ານອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເພື່ອພິຈາລະນາຮັບຮອງຕາມລະບຽບການ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**<u>ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່</u>**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດວງສີ ພາຣາຍົກ